# ພຣະທັມເອສເທີ


| | | | | |
|---|---|---|---|---|
| 1 | 2 | 3 | 4 | 5 |
| 6 | 7 | 8 | 9 | 10 |


## ເອສເທີ

ESTHER

### 1 ພຣະຣາຊີນີຊົງຂັດຂືນຮັບສັ່ງຂອງພຣະຣາຊາອາຣາຊູເອຣູສ

King Ahasuerus Deposes Queen Vashiti

1 ຢູ່ມາໃນຣັຊສະໄຫມຂອງອາຣາຊູເອຣູສ (ອາຣາຊູເອຣູສຜູ້ຊົງປົກຄອງຕັ້ງແຕ່ປະເທດອິນເດັຽເຖິງປະເທດເອທີໂອເປັຽ
ເຫນືອນຶ່ງຮ້ອຍຊາວເຈັດມົນທົນນັ້ນ)
2 ໃນສະໄຫມເມື່ອກະສັດອາຣາຊູເອຣູສປະທັບເທິງຣາຊບັນລັງຂອງພຣະອົງໃນຊູຊາເມືອງປ້ອມ
3 ໃນປີທີ່ສາມແຫ່ງຣັຊການຂອງພຣະອົງ ພຣະອົງ
ພຣະຣາຊທານການລ້ຽງແກ່ເຈົ້ານາຍ ແລະບັນດາຂ້າຣາຊການຂອງພຣະອົງ ນາຍທັບນາຍກອງທັບແຫ່ງເປີເຊັຽແລະ
ເມເດັຽ ແລະຂຸນນາງກັບຜູ້ວ່າຣາຊການມົນທົນເຝົ້າຢູ່ຕໍ່ພຣະພັກພຣະອົງ
4 ຂນະທີ່ພຣະອົງຊົງສະແດງຣາຊສົມບັດອັນຮຸ່ງເຮືອງຂອງພຣະອົງ ທັງຄວາມໂອ່ອ່າຕະການອັນຮຸ່ງໂຣດຂອງພຣະອົງຢູ່
ເປັນເວລາຫລາຍວັນເຖິງນຶ່ງຮ້ອຍແປດສິບວັນ
5 ເມື່ອພົ້ນວັນເຫລົ່ານີ້ແລ້ວພຣະອົງປະທານການລ້ຽງແກ່ປະຊາຊົນຜູ້ຢູ່ໃນຊູຊາເມືອງປ້ອມ ທັງຜູ້ໃຫຍ່ແລະຜູ້ນ້ອຍ ເຈັດ
ວັນທີ່ໃນເດີ່ນອຸທຍານແຫ່ງຣາຊສຳນັກ
6 ມີຜ້າກັ້ງຝ້າຍສີຂາວແລະສີມ່ວງຄ້ຳ ມີສາຍປ່ານ ແລະເຊືອກຂົນແກະ ສີມ່ວງຄ້ອງຮ່ວງເງິນແລະເສົາຫີນອ່ອນ ທັງຕຽງ
ທອງຄຳແລະເງິນເທິງພື້ນລາດປູນ ຝັງຫີນແດງ ຫີນອ່ອນ ມຸກດາ ແລະຫີນອ່ອນສີດຳ
7 ເຄື່ອງດື່ມກໍໃສ່ຖ້ວຍທອງຄຳສິ່ງເປັນຖ້ວຍຫລາຍ
ຊະນິດ ແລະເຫລົ້າອະງຸ່ນຂອງຣາຊສຳນັກມາກມາຍຕາມພຣະທັຍກວ້າງຂວາງຂອງພຣະຣາຊາ
8 ການດື່ມກໍກະທຳກັນຕາມກົດຫມາຍທີ່ບໍ່ມີການ
ບັງຄັບ ເພາະພຣະຣາຊາຊົງມີພຣະກະແສຮັບສັ່ງໄປຍັງພະນັກງານວ່າ ໃຫ້ທຸກຄົນທຳໄດ້ຕາມໃຈປາຖນາ
9 ພຣະຣາຊີນີວັຊຕີກໍພຣະຣາຊທານການລ້ຽງແກ່ສະຕຣີໃນຣາຊສຳນັກຊຶ່ງເປັນຂອງກະສັດອາຣາຊູເອຣູສດ້ວຍ
10 ໃນວັນທີ່ເຈັດເມື່ອພຣະທັຍຂອງພຣະຣາຊາລົ້ນເຣີງດ້ວຍເຫລົ້າອະງຸ່ນ ພຣະອົງຊົງບັນຊາ ເມຮູມານ ບິສທາ ຮາຣ໌ໂບ
ນາ ບິກທາ ແລະອາບັກທາ ເຊທາຣ໌ ແລະຄາຣ໌ກັສ ຂັນທີ (ຄົນທີ່ຖືກຕ່ອນ) ທັງເຈັດຜູ້ປົນນິບັດເຈົ້າຊີວິດອາຣາຊູເອຣູສ
11 ໃຫ້ໄປເຊີນພຣະຣາຊີນີວັຊຕີສວມມົງກຸດມາເຝົ້າ
ພຣະຣາຊາ ເພື່ອຈະໃຫ້ປະຊາຊົນແລະເຈົ້ານາຍຂອງພຣະອົງໄດ້ຊົມພຣະສິຣິໂສມຂອງພຣະນາງເພາະພຣະນາງງາມ
ຫລາຍ
12 ແຕ່ພຣະນາງວັຊຕີຊົງປະຕິເສດບໍ່ມາຕາມພຣະບັນຊາຂອງພຣະຣາຊາທີ່ຮັບສັ່ງໄປກັບຂັນທີ ເມື່ອເປັນເຊັ່ນນີ້ພຣະຣາ
ຊາຊົງເດືອດດານ ແລະພຣະ
ພິໂຣດຂອງພຣະອົງຣະອຸຢູ່ໃນພຣະອຸຣະ
13 ຝ່າຍເຈົ້າຊີວິດຈຶ່ງສັ່ງກັບຄົນທີ່ມີປັນຍາຜູ້ຊາບກາລະ (ເພາະນີ້ເປັນວິທີດຳເນີນການຂອງພຣະ

ຣາຊາຕໍ່ບັນດາຜູ້ທີ່ເຈນຈັດໃນກົດໝາຍແລະການພິພາກສາ
14 ຜູ້ທີ່ຮອງພຣະອົງ ຄື ຄາຣ໌ເຊນາ ເຊທາຣ໌ ອັດມາທາ ຕາຣ໌ຊິດ ເມເຣສ ມາຣ໌ເຊນາ ແລະເມມູການ ເຈົ້ານາຍທັງເຈັດ ຂອງເປີເຊັຽ ແລະເມເດັຽ ຜູ້ເຄີຍເຂົ້າເຝົ້າພຣະຣາຊາ ແລະນັ່ງກ່ອນໃນຣາຊອານາຈັກ)
15 ວ່າ, "ຕາມກົດໝາຍຈະຕ້ອງກະທຳສິ່ງໃດຕໍ່ພຣະຣາຊີນີວັຊຕີ ເພາະວ່າພຣະນາງບໍ່ໄດ້ປະຕິບັດຕາມພຣະບັນຊາຂອງ ກະສັດອາຮາຊູເອຣູສຊຶ່ງຮັບສັ່ງໄປກັບຂັນທີ"
16 ເມມູການຈຶ່ງທູນຕໍ່ພຣະພັກພຣະຣາຊາແລະເຈົ້ານາຍທັງປວງວ່າ, "ພຣະຣາຊີນີໄດ້ຊົງກະທຳຜິດບໍ່ໃຊ່ພຣະຣາຊາເທົ່າ ນັ້ນ ແຕ່ຕໍ່ເຈົ້ານາຍທັງປວງແລະປະຊາຊົນທັງປວງຜູ້ຢູ່ໃນມົນທົນທັງສິ້ນຂອງກະສັດອາຮາຊູເອຣູສ
17 ເພາະສິ່ງທີ່ພຣະຣາຊີນີຊົງກະທຳນີ້ຈະເປັນທີ່ຊາບແກ່ສະຕຣີທັງປວງ ເຮັດໃຫ້ເຂົາມອງເບິ່ງຜົວຂອງເຂົາດ້ວຍຄວາມປ ມາດ ເພາະເຂົາຈະເວົ້າວ່າ "ກະສັດອາຮາຊູເອຣູສມີພຣະບັນຊາໃຫ້ນຳພຣະຣາຊີນີມາຕໍ່ພຣະພັກພຣະອົງ ແຕ່ພຣະ ນາງບໍ່ສະເດັດມາ
18 ໃນບັດນີ້ເຈົ້ານາຍຜູ້ຍິງແຫ່ງເປີເຊັຽ ແລະເມເດັຽຊຶ່ງໄດ້ຍິນເຖິງມາຣະຍາດຂອງພຣະຣາຊີນີ ກໍຈະເລົ່າໃຫ້ເຈົ້ານາຍທັງ ປວງຂອງພຣະຣາຊາຮູ້ທົ່ວກັນ ເຮັດໃຫ້ມີຄວາມປມາດແລະຄວາມໂກດຂຶ້ນເປັນອັນມາກ
19 ຖ້າເປັນທີ່ພໍພຣະທັຍພຣະຣາຊາ ຂໍໃຫ້ມີພຣະຣາຊໂອງການຈາກພຣະອົງ ແລະໃຫ້ບັນທຶກໄວ້ໃນກົດໝາຍຂອງຄົນ ເປີເຊັຽແລະຄົນເມເດັຽ ຢ່າງທີ່ຄືນຄຳບໍ່ໄດ້ວ່າ ວັຊຕີຈະເຂົ້າເຝົ້າກະສັດອາຮາຊູເອຣູສບໍ່ໄດ້ ແລະຂໍພຣະຣາຊາປະທານ ຕຳແໜ່ງຣາຊີນີໃຫ້ແກ່ຍິງອື່ນທີ່ດີກວ່າພຣະນາງ
20 ດັ່ງນັ້ນເມື່ອເຈົ້າຊີວິດຊົງຊຽນຄຳປະກາດ ຕລອດ ພຣະຣາຊອານາຈັກຂອງພຣະອົງ (ອັນກວ້າງໃຫຍ່ຢ່າງຍິ່ງນັ້ນ) ສະຕຣີທັງປວງຈະຕ້ອງໃຫ້ກຽດຜົວຂອງຕົນ ບໍ່ວ່າສູງ ຫລືຕໍ່າ"
21 ຄຳທູນແນະນຳນີ້ເປັນທີ່ພໍພຣະທັຍເຈົ້າຊີວິດແລະເຈົ້ານາຍ ເຈົ້າຊີວິດຈຶ່ງຊົງກະທຳຕາມທີ່ເມມູການທູນສເນີ
22 ພຣະອົງຊົງມີພຣະອັກສອນໄປທົ່ວແຂວງຂອງ ພຣະອົງ ເຖິງທຸກແຂວງຕາມວິທີຂຽນຂອງແຂວງນັ້ນ ແລະເຖິງທຸກ ຊົນຊາດຕາມພາສາຂອງເຂົາ ໃຫ້ຊາຍທຸກຄົນເປັນເຈົ້າເປັນນາຍໃນເຮືອນຂອງຕົນ ແລະເວົ້າຕາມພາສາຊາດຂອງຕົນ

## 2 ຊົງສະຖາປະນາເອສເທີເປັນພຣະຣາຊີນີ

Esther Becomes Queen

1 ພາຍຫລັງເຫດການເຫລົ່ານີ້ ເມື່ອພຣະພິໂຣດຂອງກະສັດອາຮາຊູເອຣູສສງົບລົງ ພຣະອົງຊົງລະຣຶກເຖິງວັຊຕີແລະສິ່ງ ພຣະນາງຊົງກະທຳ ແລະຄຳປະກາດທີ່ພຣະອົງຊົງອອກເຣື່ອງຂອງນາງ
2 ຂ້າຣາຊການຂອງເຈົ້າຊີວິດຜູ້ປົນນິບັດພຣະອົງຢູ່ຈຶ່ງທູນວ່າ, "ຂໍຊົງໃຫ້ຫາຍິງພົມມະຈາຣີສາວສວຍມາຖວາຍພຣະຣາ ຊາ
3 ແລະຂໍພຣະຣາຊາຊົງແຕ່ງຕັ້ງເຈົ້າໜ້າທີ່ທຸກ ແຂວງແຫ່ງຣາຊອານາຈັກຂອງພຣະອົງ ໃຫ້ຫາຍິງພົມມະຈາຣີສາວງາມມາຍັງຮາເຣັມໃນຊູຊາເມືອງປ້ອມ ໃຫ້ຢູ່ໃນ ອາຣັກຂາຂອງເຮກັຍຂັນທີຂອງພຣະຣາຊາຜູ້ດູແລສະຕຣີ ແລະຂໍປະທານເຄື່ອງປະເທືອງຜິວສຳລັບຍິງເຫລົ່ານັ້ນ
4 ແລະຂໍໃຫ້ຍິງສາວຄົນທີ່ພຣະຣາຊາພໍພຣະທັຍໄດ້ເປັນພຣະຣາຊີນີແທນວັຊຕີ" ຂໍ້ນີ້ພໍພຣະທັຍພຣະຣາຊາ ພຣະອົງຈຶ່ງ ຊົງກະທຳຕາມນັ້ນ
5 ຍັງມີຢິວຄົນນຶ່ງໃນຊູຊາເມືອງປ້ອມຊື່ ໂມຣ໌ເດກັຍ ບຸດຢາອີຣ໌ ຜູ້ເປັນບຸດຂອງຄີສ ຄົນເບັນຢາມິນ
6 ຜູ້ຖືກກວາດຕ້ອນຈາກເຢຣູຊາເລັມໃນໝູ່ຊະເລີຍທີ່ຖືກກວາດຕ້ອນໄປພ້ອມກັບເຢໂກນີຢາເຈົ້າຊີວິດຂອງຢູດາຜູ້ຊຶ່ງ ເນບູກາດເນສຊາພຣະຣາຊາຂອງບາບີໂລນໄດ້ກວາດຕ້ອນໄປນັ້ນ

7 ທ່ານໄດ້ລ້ຽງດູຮາດາຊາຄື ເອສເທີບຸດສາວລຸງຂອງທ່ານ ເພາະນາງບໍ່ມີພໍ່ແມ່ ຍິງສາວຄົນນີ້ຮູບງາມແລະຫນ້າເບິ່ງ
ເມື່ອບິດາມານດາຂອງນາງສິ້ນຊີວິດແລ້ວ ໂມຣ໌ເດກັຍກໍຮັບນາງມາລ້ຽງເປັນບຸດຕຣີ

8 ເມື່ອຮັບສັ່ງຂອງພຣະຣາຊາແລະຄຳປະກາດຂອງພຣະອົງປະກາດອອກໄປ ແລະເມື່ອເຂົາຮວບຮວມຍິງສາວທັງ
ຫລາຍເຂົ້າມາໃນຊູຊາເມືອງປ້ອມ ເອສເທີກໍຖືກນຳເຂົ້າມາໄວ້ໃນຣາຊສຳນັກຢູ່ໃນອາຣັກຂາຂອງເຮກັຍຜູ້ດູແລສະຕຣີ

9 ຍິງນັ້ນເປັນທີ່ພໍໃຈເຂົາ ແລະນາງກໍເປັນທີ່ໂປດປານແກ່ເຂົາ ເຂົາຈຶ່ງຮີບຈັດຫາເຄື່ອງປະເທືອງຜິວ ແລະສ່ວນອາຫານ
ຂອງນາງໃຫ້ນາງ ພ້ອມກັບສາວໃຊ້ທີ່ຄັດເລືອກແລ້ວເຈັດຄົນຈາກຣາຊສຳນັກ ແລ້ວກໍເລື່ອນນາງແລະສາວໃຊ້ຂອງ
ນາງຂຶ້ນໄປຍັງສະຖານທີ່ດີທີ່ສຸດໃນຮາເຣັມ

10 ເອສເທີບໍ່ໄດ້ບອກໃຫ້ຊາບເຖິງຊາດແລະຍາດຂອງນາງ ເພາະໂມຣ໌ເດກັຍກຳຊັບນາງບໍ່ໃຫ້ໃຜຮູ້

11 ທຸກໆວັນໂມຣ໌ເດກັຍເດີນມາຫນ້າເດີ່ນຂອງຮາເຣັມ ເພື່ອຟັງຂ່າວເອສເທີວ່າເປັນຢ່າງໃດ ແລະມີສິ່ງໃດເກີດຂຶ້ນແກ່
ນາງ

12 ເມື່ອເຖິງເວນທີ່ສາວໆທຸກຄົນຈະເຂົ້າໄປເຝົ້າກະສັດອາຮາຊູເອຣູສ ຫລັງຈາກໄດ້ຕຽມຕົວຕາມຣະບຽບຂອງຍິງສິບ
ສອງເດືອນແລ້ວ (ແລະນີ້ເປັນເວລາປົກກະຕິສຳລັບປະເທືອງຜິວ ຄືຊະໂລມກາຍຍິງດ້ວຍນ້ຳມັນກຳຍານຫົກເດືອນ
ແລະຫົກເດືອນດ້ວຍເຄື່ອງເທດແລະນ້ຳມັນປະເທືອງຜິວ)

13 ເມື່ອຜູ້ຍິງຈະເຂົ້າໄປເຝົ້າພຣະຣາຊາຢ່າງນີ້ ນາງຈະຕ້ອງການເອົາສິ່ງໃດຈາກຮາເຣັມໄປຍັງຣາຊສຳນັກ ກໍເອົາໄປໄດ້

14 ນາງເຂົ້າໄປເຝົ້າໃນເວລາຄ່ຳ ແລະໃນເວລາຕອນເຊົ້ານາງກັບອອກມາໃນຮາເຣັມທີ່ສອງໃນອາຣັກຂາຂອງຊາອັຊກັສ
ຂັນທີຂອງພຣະຣາຊາຜູ້ດູແລນາງຫ້ອງ ນາງບໍ່ໄດ້ເຂົ້າໄປເຝົ້າພຣະຣາຊາອີກ ນອກຈາກພຣະຣາຊາຈະພໍພຣະທັຍໃນ
ນາງ ແລະຊົງເອີ້ນຊື່ນາງໃຫ້ເຂົ້າເຝົ້າ

15 ເມື່ອເຖິງເວນຂອງເອສເທີ ບຸດສາວຂອງອາບີຮາອິນ ລຸງຂອງໂມຣ໌ເດກັຍຜູ້ຊຶ່ງຮັບນາງໄວ້ເປັນບຸດຕຣີ ຈະເຂົ້າເຝົ້າພ
ຣະຣາຊາ ນາງບໍ່ໄດ້ຂໍສິ່ງໃດ ນອກຈາກສິ່ງທີ່ເຮກັຍຂັນທີຂອງພຣະຣາຊາດູແລຜູ້ຍິງແນະນຳ ຝ່າຍເອສເທີເປັນທີ່ຖືກ
ຕາທຸກຄົນທີ່ເຫັນນາງ

16 ເມື່ອເຂົາພາເອສເທີເຂົ້າໄປເຝົ້າກະສັດອາຮາຊູເອ
ຣູສ ໃນພຣະຣາຊສຳນັກ ໃນເດືອນທີ່ສິບຊຶ່ງເປັນເດືອນເຕເບທ ໃນປີທີ່ເຈັດແຫ່ງຣັຊການຂອງພຣະອົງ

17 ພຣະຣາຊາຊົງຮັກເອສເທີຍິ່ງກວ່າຍິງອື່ນທັງສິ້ນ ແລະນາງໄດ້ຮັບພຣະກະຣຸນາແລະຄວາມໂປດ
ປານໃນສາຍພຣະເນດຂອງພຣະອົງມາກກວ່າຍິງພົມມະຈາຣີທັງສິ້ນ ພຣະອົງຈຶ່ງຊົງສວມມົງກຸດເທິງຫົວຂອງນາງ
ແລະຊົງຕັ້ງນາງໃຫ້ເປັນພຣະຣາຊີນີແທນວັຊຕີ

18 ແລ້ວພຣະຣາຊາພຣະຣາຊທານການລ້ຽງແກ່ເຈົ້ານາຍແລະຂ້າຣາຊການທັງປວງຂອງພຣະອົງ ເປັນການລ້ຽງຂອງພ
ຣະນາງເອສເທີ ພຣະອົງຊົງອະນຸມັດໃຫ້ຊົງສ່ວຍແກ່ແຂວງທັງຫລາຍ ແລະ ພຣະຣາຊທານຂອງກຳນັນດ້ວຍພຣະ
ທັຍກວ້າງຂວາງ

Mordecai Discovers a Piot

19 ເມື່ອເຂົາຮວບຮວມຍິງພົມມະຈາຣີມາຄັ້ງທີ່ສອງ ໂມຣ໌ເດກັຍນັ່ງຢູ່ທີ່ປະຕູພຣະຣາຊວັງ

20 ຝ່າຍພຣະນາງເອສເທີນັ້ນບໍ່ໄດ້ຊົງໃຫ້ໃຜຊາບເຖິງພຣະຍາດຫລືຊົນຊາດຂອງພຣະນາງດັ່ງທີ່ໂມຣ໌ເດກັຍກຳຊັບພຣະ
ນາງໄວ້ ເພາະພຣະນາງເອສເທີຊົງເຊື່ອຟັງໂມຣ໌ເດກັຍ ເຊັ່ນດຽວກັບເມື່ອເຂົາລ້ຽງດູ ພຣະນາງມາ

21 ໃນຄັ້ງນັ້ນເມື່ອໂມຣ໌ເດກັຍນັ່ງຢູ່ທີ່ປະຕູພຣະຣາຊວັງ ບິກທານແລະເຕເຣສ ຂັນທີສອງຄົນຂອງ ພຣະຣາຊາ ຜູ້ເຝົ້າປະ
ຕູຫ້ອງນອນ ມີຄວາມໂກດແລະຊອກຫາທາງທີ່ຈະທຳຮ້າຍກະສັດອາຮາຊູເອຣູສ

22 ເຣື່ອງນີ້ຮູ້ເຖິງໂມຣ໌ເດກັຍ ແລະທ່ານກໍທູນພຣະຣາຊີນີເອສເທີ ພຣະນາງເອສເທີກາບທູນພຣະຣາຊາໃນນາມຂອງໂມ
ຣ໌ເດກັຍ

23 ເມື່ອມີການສອບສວນເຣື່ອງນີ້ວ່າເປັນຄວາມຈິງແລ້ວ ພຣະຣາຊາກໍຊົງໃຫ້ແຂວນຄໍສອງຄົນນັ້ນເສັຽທີ່ຫລັກ ແລະບັນທຶກເຣື່ອງໄວ້ໃນຫນັງສືພົງສາວະດານຕໍ່ພຣະພັກພຣະຣາຊາ

## 3 ແຜນການປອງຮ້າຍຂອງຮາມານທີ່ຈະທຳລາຍພວກຢິວ

Human Undertakes to Destroy the Jews

1 ພາຍຫລັງເຫດການເຫລົ່ານີ້ ກະສັດອາຮາຊູເອຣູສຊົງເລື່ອນຍົດຮາມານບຸດຮັມເມດາທາ ຄົນອາກັກ ພຣະຣາຊາຊົງເລື່ອນທ່ານແລະຊົງຕັ້ງເກົ້າອີ້ຂອງທ່ານໄວ້ເຫນືອກວ່າຂອງເຈົ້ານາຍທັງປວງທີ່ຢູ່ກັບພຣະອົງ
2 ຂ້າຣາຊການຊຶ່ງຢູ່ທີ່ປະຕູພຣະຣາຊວັງກໍກາບລົງສະແດງຄວາມເຄົາຣົບຕໍ່ຮາມານ ເພາະພຣະຣາຊາຊົງບັນຊາໃຫ້ສະແດງຄວາມເຄົາຣົບຕໍ່ທ່ານເຊັ່ນນັ້ນ ແຕ່ໂມຣ໌ເດກັຍບໍ່ໄດ້ກາບຫລືສະແດງຄວາມເຄົາຣົບ
3 ຂ້າຣາຊການຊຶ່ງຢູ່ທີ່ປະຕູພຣະຣາຊວັງຈຶ່ງເວົ້າກັບໂມຣ໌ເດກັຍວ່າ, "ເປັນຫຍັງທ່ານລະເມີດຄຳສັ່ງຂອງພຣະຣາຊາ"
4 ຢູ່ມາເມື່ອເຂົາທັງຫລາຍເວົ້າກັບທ່ານມື້ແລ້ວມື້ເລົ່າ ແລະທ່ານບໍ່ຟັງເຂົາ ເຂົາກໍໄປບອກຮາມານເພື່ອຈະເບິ່ງວ່າຖ້ອຍຄຳຂອງໂມຣ໌ເດກັຍຈະຊະນະຫລືບໍ່ ເພາະທ່ານບອກເຂົາວ່າທ່ານເປັນຄົນຢິວ
5 ເມື່ອຮາມານເຫັນວ່າໂມຣ໌ເດກັຍບໍ່ກາບລົງຫລືສະແດງຄວາມເຄົາຣົບຕໍ່ທ່ານ ກໍເດືອດດານ
6 ແຕ່ທ່ານເຫັນວ່າເປັນການເສັຽກຽດທີ່ຈະຈັບກຸມໂມຣ໌ເດກັຍຄົນດຽວ ຮາມານຈຶ່ງຫາຊ່ອງທາງທີ່ຈະທຳລາຍຢິວທັງຫມົດ ຄືຊົນຊາດຂອງໂມຣ໌ເດກັຍທົ່ວຣາຊອານາຈັກຂອງອາຮາຊູເອຣູສ
7 ໃນເດືອນທຳອິດຊຶ່ງເປັນເດືອນນິສານ ປີທີ່ສິບສອງແຫ່ງຣັຊການກະສັດອາຮາຊູເອຣູສ ເຂົາພາກັນໃຊ້ສະຫລາກ (ຊຶ່ງເອີ້ນກັນວ່າ ປູລິມ) ຕໍ່ຫນ້າຮາມານເພື່ອຫາມື້ດີເດືອນດີໃນການດຳເນີນແຜນປອງຮ້າຍຂອງຕົນໄດ້ວັນທີ່ສິບສາມແລະເດືອນທີ່ສິບສອງ ຄືເປັນເດືອນອາດາຣ໌
8 ແລ້ວຮາມານທູນກະສັດອາຮາຊູເອຣູສວ່າ, "ມີຊົນຊາດນຶ່ງກະຈາຍຢູ່ທົ່ວ ແລະແຍກກັນຢູ່ຖ້າມກາງຊົນຊາດທັງຫລາຍໃນມົນທົນແຫ່ງຣາຊອານາຈັກຂອງພຣະອົງ ກົດຫມາຍຂອງເຂົາຜິດກັບກົດຫມາຍຂອງຊົນຊາດອື່ນທັງສິ້ນ ແລະພວກນີ້ບໍ່ຮັກສາກົດຫມາຍຂອງພຣະຣາຊາ ການທີ່ພຣະຣາຊາຊົງປ່ອຍເຂົາໄວ້ນີ້ບໍ່ບັງເກີດປໂຍດແກ່ພຣະອົງ
9 ຖ້າເປັນທີ່ພໍພຣະທັຍພຣະຣາຊາ ຂໍຊົງອອກຄຳສັ່ງໃຫ້ທຳລາຍລ້າງເຂົາເສັຽເຖີດ ແລະຂ້ານ້ອຍຈະຖວາຍເງິນນຶ່ງຫມື່ນຕະລັນໃສ່ມືບັນດາຜູ້ທີ່ດູແລ  ພຣະຣາຊກິຈຂອງພຣະຣາຊາເພື່ອເຂົາຈະໄດ້ໃສ່ໃນພຣະຄັງຂອງພຣະຣາຊາ"
10 ເຈົ້າຊີວິດຈຶ່ງຖອດແຫວນຕາອອກຈາກພຣະຫັດຂອງພຣະອົງມອບແກ່ຮາມານບຸດຮັມເມດາທາ ຄົນອາກັກ ສັດຕຣູຂອງພວກຢິວ
11 ແລະກ່າວກັບຮາມານວ່າ, "ເຮົາມອບເງິນນັ້ນໃຫ້ແກ່ທ່ານ ແລະມອບປະຊາຊົນແກ່ທ່ານດ້ວຍ ເພື່ອຈະທຳແກ່ເຂົາຕາມທີ່ທ່ານເຫັນດີ"
12 ແລ້ວຊົງເອີ້ນຣາຊອາຣັກເຂົ້າມາໃນວັນທີ່ສິບສາມເດືອນຕົ້ນ ໃຫ້ຂຽນປະກາດຕາມທີ່ຮາມານສັ່ງໄວ້ທຸກປະການ ສົ່ງໄປຍັງຜູ້ປົກຄອງແຂວງຂອງພຣະຣາຊາ ເຖິງປົກຄອງເມືອງມົນທົນທັງປວງ ແລະ ເຖິງເຈົ້ານາຍແຫ່ງຊົນຊາດ ເຖິງທຸກມົນທົນເປັນຕົວອັກສອນຂອງມົນທົນນັ້ນ ແລະເຖິງຊົນທຸກຊາດເປັນພາສາຂອງເຂົາ ຂຽນໃນພຣະນາມຂອງກະສັດອາຮາຊູອາຣັສ ແລະປະທັບຕາດ້ວຍແຫວນຂອງພຣະຣາຊາ
13 ໃຫ້ຄົນເດີນຂ່າວຈົດຫມາຍເຫລົ່ານີ້ໄປເຖິງມົນທົນຂອງພຣະຣາຊາທັງສິ້ນ ສັ່ງໃຫ້ທຳລາຍ  ສັງຫານ ແລະລ້າງຢິວທັງປວງ ທັງຫນຸ່ມແລະຜູ້ເຖົ້າ ເດັກນ້ອຍແລະຜູ້ຍິງໃນວັນດຽວກັນ ຄືວັນທີ່ສິບສາມເດືອນທີ່ສິບສອງ ຊຶ່ງເປັນເດືອນອາດາຣ໌ ແລະໃຫ້ຍຶດເຂົ້າຂອງຂອງເຂົາໄປຫມົດ
14 ໃຫ້ອອກສຳເນົາເອກກະສານນັ້ນເປັນຄຳປະກາດໃນທຸກມົນທົນ ນຳໄປປ່າວຮ້ອງໃຫ້ຊົນຊາດທັງປວງຕຽມພ້ອມເພື່ອວັນນັ້ນ

15 ບັນດາຄົນເດີນຂ່າວກໍຣີບໄປຕາມຮັບສັ່ງຂອງພຣະຣາຊາ ແລະອອກປະກາດນັ້ນໃນຊູຊາເມືອງປ້ອມ ພຣະຣາຊາກໍປະ
ທັບດື່ມກັບຮາມານ ສ່ວນຊາວນະຄອນຊູຊາກໍພາກັນຮ້ອນໃຈ

## 4 ເອສເທີສັນຍາທີ່ຈະກາບທູນອ້ອນວອນເພື່ອປະຊາຊົນຂອງພຣະນາງ

Esther Agree to Help the Jews

1 ເມື່ອໂມຣ໌ເດກັຍຊາບທຸກຢ່າງທີ່ໄດ້ກະທຳໄປແລ້ວ ກໍຈີກເຄື່ອງນຸ່ງຂອງຕົນສວມຜ້າກະສອບແລະໃສ່
ຂີ້ເຖົ່າ ແລະອອກໄປກາງນະຄອນ ຄ່ຳຄວນດ້ວຍສຽງດັງຢ່າງຂົມຂື່ນ
2 ທ່ານຂຶ້ນໄປຢູ່ທີ່ທາງເຂົ້າປະຕູຂອງພຣະຣາຊາ ເພາະບໍ່ມີຜູ້ໃດທີ່ສວມຜ້າກະສອບເຂົ້າປະຕູຂອງ  ພຣະຣາຊາໄດ້
3 ແລະໃນທຸກມົນທົນທີ່ພຣະບັນຊາຂອງພຣະຣາຊາແລະການປະກາດຂອງພຣະອົງໄປເຖິງ ກໍມີການໄວ້ທຸກຢ່າງໃຫຍ່
ຫລວງຖ້າມກາງພວກຢິວ ດ້ວຍການອົດອາຫານ ຮ້ອງໄຫ້ແລະຄ່ຳຄວນ ແລະຄົນເປັນຈຳນວນຫລາຍນອນໃນຜ້າກະ
ສອບແລະມີຂີ້ເຖົ່າ
4 ເມື່ອສາວໃຊ້ແລະຂັນທີຂອງພຣະນາງເອສເທີມາທູນພຣະນາງ ພຣະຣາຊິນີກໍເປັນທຸກໃນພຣະທັຍຍິ່ງນັກ ພຣະນາງ
ຊົງສົ່ງເຄື່ອງນຸ່ງໄປໃຫ້ແກ່ໂມຣ໌ເດກັຍ ເພື່ອທ່ານຈະໄດ້ຖອດຜ້າກະສອບຂອງທ່ານອອກເສັຽ ແຕ່ທ່ານບໍ່ຍອມຮັບຜ້າ
ນັ້ນ
5 ແລ້ວພຣະນາງເອສເທີກໍເອີ້ນຮາທາກຂັນທີຄົນນຶ່ງຂອງພຣະຣາຊາ ຜູ້ຊຶ່ງພຣະອົງຊົງແຕ່ງຕັ້ງໃຫ້ບົວລະບັດພຣະນາງ
ກ່າວສັ່ງໃຫ້ໄປຫາໂມຣ໌ເດກັຍ ເພື່ອຈະຊົງຊາບວ່າ ເຣື່ອງຫຍັງ ແລະເປັນຫຍັງຈຶ່ງທຳເຊັ່ນນັ້ນ
6 ຮາທາກອອກໄປຫາໂມຣ໌ເດກັຍທີ່ລານກວ້າງກາງແຈ້ງທີ່ໃນນະຄອນ ຂ້າງຫນ້າປະຕູຂອງພຣະຣາຊາ
7 ໂມຣ໌ເດກັຍກໍເລົ່າເຣື່ອງທັງສິ້ນທີ່ເກີດແກ່ທ່ານ ແລະຈຳນວນເງິນຖືກຕ້ອງທີ່ຮາມານສັນຍາຖວາຍແກ່ພຣະຄັງຂອງພ
ຣະຣາຊາເພື່ອການທຳລາຍພວກຢິວ
8 ໂມຣ໌ເດກັຍຍັງໄດ້ໃຫ້ສຳເນົາປະກາດຂຽນທີ່ອອກໃນຊຸຊາສັ່ງໃຫ້ທຳລາຍເຂົາທັງຫລາຍເພື່ອນຳໄປສະແດງແກ່ພຣະ
ນາງເອສເທີ ອະທິບາຍເຣື່ອງໃຫ້ພຣະນາງ ແລະກຳຊັບໃຫ້ພຣະນາງເຂົ້າເຝົ້າພຣະຣາຊາ ເພື່ອທູນອ້ອນວອນພຣະອົງ
ແລະວິງວອນພຣະອົງເພື່ອເຫັນແກ່ຊົນຊາດຂອງພຣະນາງ
9 ຮາທາກກໍກັບໄປທູນພຣະນາງເອສເທີເຖິງສິ່ງທີ່ໂມຣ໌ເດກັຍໄດ້ບອກໄວ້
10 ແລ້ວພຣະນາງເອສເທີກໍບອກຮາທາກໃຫ້ສົ່ງຂ່າວໄປໃຫ້ໂມຣ໌ເດກັຍວ່າ,
11 "ຂ້າຣາຊການຂອງພຣະຣາຊາທັງສິ້ນ ແລະປະຊາຊົນໃນບັນດາມົນທົນຂອງພຣະຣາຊາຊາບຢູ່ວ່າ ຖ້າຊາຍຫລືຍິງຄົນ
ໃດເຂົ້າເຝົ້າພຣະຣາຊາພາຍໃນພຣະລານຊັ້ນໃນໂດຍບໍ່ໄດ້ຊົງເອີ້ນ ກໍມີກົດຫມາຍຢູ່ຂໍ້ດຽວເຫມືອນກັນຫມົດ ໃຫ້ລົງ
ໂທດເຖິງຕາຍ ເວັ້ນເສັຽແຕ່ຜູ້ຊຶ່ງພຣະຣາຊາຍື່ນໄມ້ເທົ້າຄຳອອກຮັບຄົນນັ້ນຈຶ່ງຈະມີຊີວິດຢູ່ໄດ້ ສ່ວນຂ້ອຍພຣະຣາຊາກໍ
ບໍ່ໄດ້ຕຣັດເອີ້ນໃຫ້ເຂົ້າເຝົ້າມາສາມສິບວັນແລ້ວ"
12 ເຂົາທັງຫລາຍກໍມາບອກໂມຣ໌ເດກັຍເຖິງສິ່ງທີ່    ພຣະນາງເອສເທີຕຣັດນັ້ນ
13 ໂມຣ໌ເດກັຍຈຶ່ງບອກເຂົາໃຫ້ກັບໄປທູນຕອບພຣະນາງເອສເທີວ່າ, "ຢ່າຄິດວ່ານາງຢູ່ໃນຣາຊສຳນັກຈະລອດພົ້ນໄດ້
ດີກວ່າພວກຢິວອື່ນໆ
14 ເພາະຖ້ານາງງຽບຢູ່ໃນເວລານີ້ ຄວາມຊ່ອຍເຫລືອແລະການຊ່ອຍກູ້ຈະມາເຖິງພວກຢິວຈາກທີ່ອື່ນ ແຕ່ນາງແລະຄົວ
ເຮືອນບິດາຂອງນາງຈະພິນາດ ທີ່ຈິງນາງມາຮັບຕຳແຫນ່ງຣາຊີນີກໍເພື່ອຍາມເຊັ່ນນີ້ກໍເປັນໄດ້ ໃຜຈະຮູ້"
15 ແລ້ວເອສເທີຕຣັດບອກເຂົາໃຫ້ໄປບອກໂມຣ໌ເດກັຍວ່າ,
16 "ໄປເຖີດ ໃຫ້ຮວບຮວມພວກຢິວທັງສິ້ນທີ່ຫາພົບໃນຊູຊາ ແລະຖືອົດອາຫານເພື່ອຂ້ອຍ ຢ່າຮັບປະທານ ຢ່າດື່ມສາມ
ວັນກາງຄືນຫລືກາງເວັນ ຂ້ອຍແລະສາວໃຊ້ຂອງຂ້ອຍຈະອົດອາຫານຢ່າງທ່ານດ້ວຍ ແລ້ວຂ້ອຍຈະເຂົ້າເຝົ້າພຣະຣາ
ຊາ ແມ້ວ່າເປັນການຝ່າຝືນກົດຫມາຍ ຖ້າຂ້ອຍພິນາດ ຂ້ອຍກໍພິນາດ"

17 ໂມຣ໌ເດກັຍກໍໄປກະທຳທຸກຢ່າງຕາມທີ່ພຣະນາງເອສເທີຮັບສັ່ງແກ່ທ່ານ

## 5 ເອສເທີຊິງເຊີນພຣະຣາຊາແລະຮາມານໄປສະເຫວີຍທີ່ຕຳນັກ

Esther’s Banquet

1 ຢູ່ມາໃນວັນທີ່ສາມພຣະນາງເອສເທີຊົງສລອງ ພຣະອົງແລະປະທັບຢືນທີ່ໃນລານຊັ້ນໃນຂອງ ພຣະຣາຊສຳນັກກົງ
ກັນຂ້າມກັບຫ້ອງພຣະໂຮງໃຫຍ່ຂອງພຣະຣາຊາ ພຣະຣາຊາປະທັບເທິງຣາຊບັນລັງ ພາຍໃນພຣະຣາຊວັງກົງຂ້າມ
ທາງເຂົ້າ ພຣະຣາຊວັງ
2 ເມື່ອພຣະຣາຊາທອດພຣະເນດເຫັນພຣະຣາຊີນີ ເອສເທີປະທັບຢືນຢູ່ໃນພຣະລານ ພຣະນາງກໍເປັນທີ່ໂປດປານໃນ
ສາຍພຣະເນດຂອງພຣະອົງ ພຣະອົງຈຶ່ງຊົງຍື່ນໄມ້ເທົ້າຄຳຊຶ່ງຢູ່ໃນພຣະຫັດຂອງ ພຣະອົງແກ່ພຣະນາງເອສເທີ ພຣະ
ນາງກໍສະເດັດເຂົ້າມາແຕະຍອດໄມ້ເທົ້າ
3 ພຣະຣາຊາກ່າວກັບພຣະນາງວ່າ, “ພຣະຣາຊີນີ ເອສເທີ ມີເຣື່ອງຫຍັງ ພຣະນາງຕ້ອງການສິ່ງໃດ ກໍຈະປະທານໃຫ້
ແກ່ພຣະນາງເຖິງເຄິ່ງຣາຊອານາຈັກຂອງເຮົາ”
4 ແລະພຣະນາງເອສເທີທູນວ່າ, “ຖ້າເປັນທີ່ພໍພຣະທັຍພຣະຣາຊາ ຂໍພຣະຣາຊາສະເດັດມາພ້ອມກັບຮາມານໃນວັນນີ້
ເພື່ອສະເຫວີຍພຣະກະຍາຫານທີ່ຂ້ານ້ອຍຕຽມໄວ້ເພື່ອໃຕ້ຝ່າພຣະບາດ”
5 ພຣະຣາຊາຈຶ່ງກ່າວວ່າ, “ໃຫ້ຮາມານຮີບມາ ເຮົາຈະໄດ້ກະທຳຕາມທີ່ພຣະນາງເອສເທີປາຖນາ” ພຣະຣາຊາຈຶ່ງສະ
ເດັດໄປໃນການລ້ຽງກັບຮາມານຊຶ່ງພຣະນາງເອສເທີໄດ້ຊົງຕຽມໄວ້
6 ຂນະເມື່ອສະເຫວີຍເຫລົ້າອະງຸ່ນຢູ່ພຣະຣາຊາກ່າວກັບເອສເທີວ່າ, “ຄຳຂໍຂອງພຣະນາງວ່າແນວໃດ ເຮົາຈະໃຫ້ ແມ້
ຈະເຖິງເຄິ່ງຣາຊອານາຈັກຂອງເຮົາກໍຈະສຳເຣັດ”
7 ພຣະນາງເອສເທີທູນວ່າ, “ຄຳຮ້ອງຂໍຂອງຂ້ານ້ອຍແລະຄຳທູນຂໍຂອງຂ້ານ້ອຍ
8 ຄືຖ້າຂ້ານ້ອຍເປັນທີ່ໂປດປານໃນສາຍພຣະເນດຂອງພຣະຣາຊາ ແລະເປັນທີ່ພໍພຣະທັຍພຣະຣາຊາທີ່ຈະປະທານ
ຕາມຄຳຮ້ອງຂໍຂອງຂ້ານ້ອຍ ແລະໃຫ້ຄຳທູນຂໍຂອງຂ້ານ້ອຍສຳເຣັດນີ້ ຂໍພຣະຣາຊາສະເດັດມາຍັງການລ້ຽງຊຶ່ງຂ້າ
ນ້ອຍຈະຕຽມໄວ້ພ້ອມກັບຮາມານ ແລະມື້ອື່ນຂ້ານ້ອຍຈະກະທຳຕາມທີ່ພຣະຣາຊາກ່າວນັ້ນ”
9 ວັນນັ້ນຮາມານກໍອອກໄປດ້ວຍໃຈຊື່ນບານແລະຍິນດີ ແຕ່ເມື່ອຮາມານເຫັນໂມຣ໌ເດກັຍທີ່ປະຕູຂອງພຣະຣາຊາ ບໍ່ຢືນ
ຂຶ້ນຫລືຕົວສັ່ນຢູ່ຕໍ່ຫນ້າທ່ານ ທ່ານກໍກິ້ວຕໍ່ໂມຣ໌ເດກັຍ
10 ເຖິງຢ່າງນັ້ນກໍດີ ຮາມານກໍອົດກັ້ນໄວ້ ກັບໄປບ້ານໃຊ້ໃຫ້ຄົນໄປຕາມບັນດາເພື່ອນຂອງຕົນ ແລະເຊເຣສເມັຽຂອງຕົນ
11 ຮາມານພັນລະນາເຖິງຄວາມໂອ່ໂຖງແຫ່ງຄວາມຮັ່ງມີຂອງທ່ານຈຳນວນບຸດຂອງທ່ານແລະກຽດຕິຍົດຕ່າງໆຊຶ່ງພຣະ
ຣາຊາພຣະຣາຊທານແກ່ທ່ານ ແລະເຖິງເຣື່ອງວ່າພຣະຣາຊາໄດ້ເລື່ອນທ່ານຂຶ້ນເຫນືອເຈົ້ານາຍ ແລະຂ້າຣາຊການ
ຂອງພຣະຣາຊາຢ່າງໃດ
12 ແລ້ວຮາມານເສີມວ່າ, “ແມ້ພຣະຣາຊີນີເອສເທີກໍບໍ່ໄດ້ຊົງໃຫ້ຜູ້ໃດໄປກັບພຣະຣາຊາ ໃນການລ້ຽງຊຶ່ງພຣະນາງຊົງຈັດ
ຂຶ້ນນອກຈາກຕົວຂ້ອຍ ແລະມື້ອື່ນພຣະນາງຊົງເຊີນຂ້ອຍກັບພຣະຣາຊາອີກ
13 ແຕ່ສິ່ງເຫລົ່ານີ້ບໍ່ມີປໂຍດສຳລັບຂ້ອຍ ຕາບໃດທີ່ຂ້ອຍເຫັນໂມຣ໌ເດກັຍຄົນຢິວນັ່ງຢູ່ທີ່ປະຕູຂອງພຣະຣາຊາ”
14 ເຊເຣສເມັຽຂອງທ່ານ ແລະສະຫາຍທັງສິ້ນຂອງທ່ານຈຶ່ງເວົ້າກັບທ່ານວ່າ, “ຂໍເຮັດບ່ອນແຂວນຄໍສູງຫ້າສິບສອກ ມື້ອື່ນ
ເຊົ້າກໍທູນພຣະຣາຊາໃຫ້ແຂວນໂມຣ໌ເດກັຍເສັຽທີ່ນັ້ນ ແລ້ວກໍໄປກິນລ້ຽງຢ່າງລ່າເລີງກັບພຣະຣາຊາ” ຄຳແນະນຳນີ້
ເປັນທີ່ພໍໃຈຮາມານທ່ານຈຶ່ງສັ່ງໃຫ້ເຮັດຫລັກແຂວນຄໍ

## 6 ຮາມານຖືກບັງຄັບໃຫ້ການໃຫ້ກຽດແກ່

## ໂມຣ໌ເດກັຍ

The King Honors Mordecai

1 ຄືນວັນນັ້ນພຣະຣາຊາບັນທົມບໍ່ຫລັບ ແລະພຣະອົງຮັບສັ່ງໃຫ້ນຳຫນັງສືບັນທຶກເຫດທີ່ຫນ້າຈົດຈຳຄືພຣະຣາຊພົງສາວະດານມາ ເຂົາກໍອ່ານຖວາຍ ພຣະຣາຊາ

2 ພຣະອົງຊົງເຫັນຂຽນໄວ້ວ່າໂມຣ໌ເດກັຍໄດ້ທູນເຣື່ອງບິກທານາແລະເຕເຣສຢ່າງໃດ ຄືເຣື່ອງຂັນທີສອງຄົນຂອງພຣະຣາຊາຜູ້ເຝົ້າປະຕູຫາຊ່ອງຈະປົງພຣະຊົນກະສັດອາຣາຊູເອຣູສ

3 ພຣະຣາຊາກ່າວວ່າ, “ໄດ້ໃຫ້ກຽດແລະຍົດຫຍັງແກ່ໂມຣ໌ເດກັຍເພາະເຣື່ອງນີ້ແດ່” ຂ້າຣາຊການຂອງພຣະຣາຊາຜູ້ບົວລະບັດພຣະອົງທູນວ່າ, “ຍັງບໍ່ໄດ້ໃຫ້ສິ່ງໃດເລີຍ”

4 ເຈົ້າຊີວິດກ່າວວ່າ, “ໃຜຢູ່ໃນລານບ້ານ” ຝ່າຍຮາມານຫາກໍເຂົ້າມາເຖິງພຣະລານຊັ້ນນອກແຫ່ງ ຣາຊສຳນັກເພື່ອຈະທູນພຣະຣາຊາເອົາໂມຣ໌ເດກັຍແຂວນຄໍເທິງຫລັກ ຊຶ່ງທ່ານໄດ້ຕຽມໄວ້ສຳລັບເຂົາ

5 ຂ້າຣາຊການຂອງພຣະຣາຊາຈຶ່ງທູນພຣະອົງວ່າ, “ນັ້ນຮາມານ ກຳລັງຢືນຢູ່ໃນພຣະລານຢູ່” ແລະ  ພຣະຣາຊາສັ່ງວ່າ, “ໃຫ້ທ່ານເຂົ້າມານີ້”

6 ຮາມານຈຶ່ງເຂົ້າມາ ພຣະຣາຊາສັ່ງກັບທ່ານວ່າ, “ຫາກພຣະຣາຊາມີພຣະປະສົງຈະປະທານກຽດ  ຕົຍົດແກ່ບຸກຄົນໃດຜູ້ໃດແລ້ວ ພຣະຣາຊາຄວນຈະທຳແກ່ເຂົາປະການໃດ” ແລະຮາມານຮຳພຶງໃນໃຈວ່າ, “ຜູ້ໃດຫນໍທີ່ພຣະຣາຊາພໍພຣະທັຍຈະປະທານກຽດຕົຍົດຫລາຍກວ່າຂ້າ”

7 ແລ້ວຮາມານຈຶ່ງທູນພຣະຣາຊາວ່າ, “ເພື່ອໃຫ້ກຽດແກ່ຄົນທີ່ພຣະຣາຊາພໍພຣະທັຍຈະປະທານກຽດຕົຍົດນັ້ນ

8 ຂໍນຳສລອງພຣະອົງຊຶ່ງພຣະຣາຊາຊົງ ແລະມ້າຊຶ່ງພຣະຣາຊາຊົງ ແລະຊຶ່ງມີຜ້າໂພກຫົວ

9 ຂໍຊົງມອບສລອງພຣະອົງແລະມ້າແກ່ເຈົ້ານາຍຜູ້ໃຫຍ່ຍິ່ງທີ່ສຸດຄົນນຶ່ງຂອງພຣະຣາຊາ ຂໍໃຫ້ແຕ່ງຄົນທີ່ພຣະຣາຊາພໍພຣະທັຍຈະປະທານກຽດຕົຍົດແລະຂໍໃຫ້ຊາຍນັ້ນຂຶ້ນນັ່ງຫລັງມ້າໄປຕາມຖນົນຂອງກຸງ ແລະປ່າວຮ້ອງໄປຂ້າງຫນ້າເຂົາວ່າ “ຜູ້ທີ່ພຣະຣາຊາພໍພຣະທັຍຈະປະທານກຽດຕົຍົດກໍເປັນເຊັ່ນນີ້ແຫລະ”

10 ພຣະຣາຊາຈຶ່ງກ່າວກັບຮາມານວ່າ, “ຈົ່ງຟ້າວໄປເອົາເສື້ອແລະມ້າຢ່າງທີ່ທ່ານວ່າ ແລ້ວໃຫ້ກຽດແກ່ໂມຣ໌ເດກັຍຄົນຢິວຊຶ່ງນັ່ງທີ່ປະຕູພຣະຣາຊວັງ ຢ່າເວັ້ນສິ່ງໃດທີ່ທ່ານກ່າວມານັ້ນເລີຍ”

11 ຮາມານຈຶ່ງນຳສລອງພຣະອົງກັບມ້າ ແລະຕົບແຕ່ງໂມຣ໌ເດກັຍ ແລະໃຫ້ທ່ານຂຶ້ນມ້າໄປຕາມຖນົນໃນກຸງ ປ່າວຮ້ອງໄປວ່າ “ຄົນທີ່ພຣະຣາຊາພໍ ພຣະທັຍຈະປະທານກຽດກໍເປັນຢ່າງນີ້ແຫລະ”

12 ແລ້ວໂມຣ໌ເດກັຍກໍກັບມາຍັງປະຕູພຣະຣາຊວັງ ແຕ່ຮາມານຟ້າວກັບໄປບ້ານຂອງທ່ານ ຄຸມຫົວແລະຄໍ່າຄວນ

13 ແລະເລົ່າທຸກສິ່ງທີ່ເກີດຂຶ້ນແກ່ທ່ານໃຫ້ເຊເຣສເມັຽຂອງທ່ານ ແລະສະຫາຍທັງຫລາຍຂອງທ່ານຟັງ ຄົນສລາດຂອງທ່ານແລະເຊເຣສເມັຽຂອງທ່ານຈຶ່ງເວົ້າວ່າ, “ຖ້າທ່ານເລີ້ມລົ້ມລົງຕໍ່ຫນ້າ  ໂມຣ໌ເດກັຍຊຶ່ງເປັນຊາດຢິວ ທ່ານຈະບໍ່ຊະນະເຂົາ ແຕ່ຈະລົ້ມລົງຕໍ່ຫນ້າເຂົາແນ່ນອນ”

14 ຂນະເມື່ອເຂົາທັງຫລາຍກຳລັງເວົ້າກັບທ່ານຢູ່ ຂັນທີຂອງພຣະຣາຊາກໍມາເຖິງຟ້າວນຳຮາມານໄປຍັງການລ້ຽງຊຶ່ງພຣະນາງເອສເທີຊົງຈັດນັ້ນ

## 7 ຮາມານຖືກແຂວນຄໍ

Haman’s Downfall and Mordecai’s Advancement

1 ພຣະຣາຊາຈຶ່ງສະເດັດກັບຮາມານໄປໃນການລ້ຽງກັບພຣະຣາຊີນີເອສເທີ

2 ໃນວັນທີ່ສອງເມື່ອກຳລັງດື່ມເຫລົ້າອະງຸ່ນຢູ່ ພຣະຣາຊາຕຣັດກັບເອສເທີວ່າ “ພຣະຣາຊີນີເອສເທີ  ຄຳຮ້ອງຂໍຂອງພຣະນາງຄືຫຍັງ ແລະຄຳທູນຂໍຂອງພຣະນາງຄືຫຍັງ ເຮົາຈະປະທານໃຫ້ ແມ້ເຖິງເຄິ່ງຣາຊອານາຈັກຂອງເຮົາ ກໍຈະສຳເຣັດ”

3 ພຣະຣາຊີນີເອສເທີທູນຕອບວ່າ, “ຂ້າແຕ່ພຣະຣາຊາ ຖ້າຂ້ານ້ອຍເປັນທີ່ໂປດປານໃນສາຍພຣະເນດຂອງພຣະອົງ ແລະຖ້າເປັນທີ່ພໍພຣະທັຍພຣະຣາຊາ ຂໍພຣະຣາຊທານຊີວິດຂອງຂ້ານ້ອຍແລະຂອງຊົນຊາດຕາມຄຳທູນຂໍຂອງຂ້ານ້ອຍ

4 ເພາະພວກເຮົາຖືກຂາຍທັງຂ້ານ້ອຍແລະຊົນຊາດຂອງຂ້ານ້ອຍໃຫ້ຖືກທຳລາຍ ໃຫ້ຖືກສັງຫານແລະໃຫ້ຖືກລ້າງຜານ ຖ້າພວກເຮົາຖືກຂາຍພຽງໃຫ້ເປັນທາດຊາຍແລະຍິງ ຂ້ານ້ອຍກໍຈະອົດກັ້ນສງົບໄວ້ ເພາະຄວາມທຸກຍາກຂອງເຮົາຈະປຽບກັບຜົນເສັຽຫາຍຂອງພຣະຣາຊານັ້ນກໍບໍ່ໄດ້”

5 ກະສັດອາຮາຊູເອຣູສຈຶ່ງກ່າວກັບພຣະຣາຊີນີເອສເທີວ່າ, “ຜູ້ນັ້ນຄືໃຜ ຢູ່ທີ່ໃດ ຈຶ່ງບັງອາດຄິດການກະທຳເຊັ່ນນີ້”

6 ແລະພຣະນາງເອສເທີທູນວ່າ, “ຄູ່ອະຣy ແລະສັດຕຣູຄືຮາມານຄົນໂຫດຮ້າຍຜູ້ນີ້ແຫລະ” ຮາມານກໍຢ້ານຢູ່ຕໍ່ພຣະພັກພຣະຣາຊາແລະພຣະຣາຊີນີ

7 ພຣະຣາຊາຊົງລຸກຂຶ້ນຈາກການລ້ຽງດ້ວຍຊົງພຣະພິໂຣດ ແລະສະເດັດເຂົ້າໄປໃນຣາຊອຸທຍານ ແຕ່ຮາມານຍັງຢູ່ເພື່ອທູນຂໍຊີວິດຈາກພຣະຣາຊີນີເອສເທີ ເພາະທ່ານເຫັນວ່າພຣະຣາຊາຊົງມຸ່ງຮ້າຍຕໍ່ທ່ານແລ້ວ

8 ເມື່ອພຣະຣາຊາສະເດັດກັບຈາກຣາຊອຸທຍານມາຍັງທີ່ຊຶ່ງດື່ມເຫລົ້າອະງຸ່ນ ຝ່າຍຮາມານຍັງກາບຢູ່ທີ່ພຣະແທ່ນຊຶ່ງພຣະນາງເອສເທີປະທັບຢູ່ນັ້ນ ພຣະຣາຊາກ່າວວ່າ, “ເຂົາຍັງຈະຂົ່ມຂືນພຣະຣາ ຊີນີຕໍ່ຫນ້າຕໍ່ຕາເຮົາໃນບ້ານຂອງເຮົາຫລື” ພໍພຣະຣາຊາເວົ້າບໍ່ທັນຂາດຄຳຊໍ້າ ເຂົາກໍມາຄຸມຫນ້າຮາມານ

9 ຮາຣ໌ໂບນາຂັນທີຄົນນຶ່ງທີ່ບົວລະບັດພຣະຣາຊາຢູ່ຈຶ່ງທູນວ່າ, “ອີກປະການນຶ່ງ ຫລັກແຂວນຄໍ ຊຶ່ງຮາມານຕຽມໄວ້ສຳລັບໂມຣ໌ເດກັຍ ຊຶ່ງຣາຍງານຊ່ອຍຊີວິດພຣະຣາຊາ ກໍຍັງຕັ້ງຢູ່ທີ່ບ້ານຂອງຮາມານ ສູງຫ້າສິບສອກ” ພຣະຣາຊາຕຣັດວ່າ, “ແຂວນມັນເທິງນັ້ນແຫລະ”

10 ເຂົາກໍແຂວນຮາມານເທິງບ່ອນແຂວນຄໍຊຶ່ງທ່ານໄດ້ຕຽມໄວ້ສຳລັບໂມເດກັຍ ແລ້ວພຣະພິໂຣດຂອງພຣະຣາຊາກໍສງົບລົງ

## 8 ພວກຢິວຮັບມອບອຳນາດໃຫ້ຕໍ່ຕ້ານ

Esther Saves the Jews

1 ໃນວັນນັ້ນກະສັດອາຮາຊູເອຣູສພຣະຣາຊທານບ້ານເຮືອນຂອງຮາມານສັດຕຣູຂອງພວກຢິວແກ່ພຣະຣາຊີນີເອສເທີ ໂມຣ໌ເດກັຍກໍເຂົ້າເຝົ້າພຣະຣາຊາ ເພາະພຣະນາງເອສເທີໄດ້ທູນວ່າທ່ານເປັນຫຍັງກັບພຣະນາງ

2 ພຣະຣາຊາຈຶ່ງຖອດແຫວນທີ່ມີຕາປະທັບ ຊຶ່ງພຣະອົງຊົງເອົາມາຈາກຮາມານພຣະຣາຊທານໃຫ້ ໂມຣ໌ເດກັຍ ພຣະນາງເອສເທີກໍຊົງຕັ້ງໂມຣ໌ເດກັຍເປັນໃຫຍ່ເຫນືອບ້ານເຮືອນຂອງຮາມານ

3 ແລ້ວພຣະນາງເອສເທີກາບທູນພຣະຣາຊາອີກ ພຣະນາງຂາບລົງທີ່ພຣະບາດຂອງພຣະອົງ ແລະວິງວອນພຣະອົງດ້ວຍນໍ້າພຣະເນດ ຂໍໃຫ້ແຜນການຮ້າຍຂອງຮາມານ ຄົນອາກັກ ແລະການປອງຮ້າຍຊຶ່ງທ່ານໄດ້ຄິດຂຶ້ນຕໍ່ພວກຢິວນັ້ນພົ້ນ ໄປເສັຽ

4 ພຣະຣາຊາຈຶ່ງຊົງຍື່ນໄມ້ເທົ້າແກ່ພຣະນາງເອສເທີ ພຣະນາງເອສເທີກໍຊົງລຸກຂຶ້ນປະທັບຢືນເຝົ້າພຣະຣາຊາ

5 ພຣະນາງທູນວ່າ, “ຖ້າເປັນທີ່ພໍພຣະທັຍພຣະຣາຊາ ແລະຖ້າຂ້ານ້ອຍເປັນທີ່ໂປດປານໃນສາຍພຣະເນດຂອງພຣະອົງ ຖ້າສິ່ງນັ້ນເປັນສິ່ງທີ່ຖືກຕ້ອງຕໍ່ພຣະພັກພຣະຣາຊາ ແລະຂ້ານ້ອຍເປັນທີ່ໂປດປານໃນສາຍພຣະເນດຂອງພຣະອົງຂໍຊົງໃຫ້ມີພຣະອັກສອນຮັບສັ່ງໃຫ້ກັບຄວາມໃນຈົດຫມາຍຊຶ່ງຮາມານ ຄົນອາກັກ ບຸດຮາມເມດາທາໄດ້ຄິດຂຶ້ນ ແລະຂຽນເພື່ອທຳລາຍພວກຢິວທີ່ຢູ່ໃນມົນທົນຂອງພຣະຣາຊາ

6 ເພາະຂ້ານ້ອຍຈະອົດທົນເບິ່ງພັຍວິບັດມາເຖິງຊາດຂອງຂ້ານ້ອຍໄດ້ຢ່າງໃດ ຂ້ານ້ອຍຈະທົນເບິ່ງການທຳລາຍຍາດພີ່ນ້ອງຂອງຂ້ານ້ອຍໄດ້ຢ່າງໃດ”

7 ກະສັດອາຮາຊູເອຣູສຈຶ່ງຕຣັດກັບພຣະຣາຊິນີເອສເທີແລະແກ່ໂມຣ໌ເດກັຍຄົນຢິວວ່າ, “ເບິ່ງແມ, ເຮົາມອບບ້ານເຮືອນ
ຂອງຮາມານແກ່ພຣະນາງເອສເທີແລ້ວ ແລະເຂົາກໍແຂວນມັນເທິງຫລັກ ເພາະມັນຈະທຳອັນຕະຣາຍແກ່ພວກຢິວ
8 ທ່ານຈົ່ງຂຽນຕາມທີ່ທ່ານພໍໃຈກ່ຽວກັບເຣື່ອງຢິວໃນນາມຂອງພຣະຣາຊາ ເພາະວ່າການປະກາດທີ່ຂຽນໃນນາມຂອງພ
ຣະຣາຊາແລະປະທັບຕາຂອງກະສັດຈະປ່ຽນກັບບໍ່ໄດ້”
9 ແລ້ວພຣະອົງຊົງເອີ້ນຣາຊອາຣັກເຂົ້າມາໃນເວລານັ້ນ ໃນເດືອນທີ່ສາມຊຶ່ງເປັນເດືອນຊີວັນ (si’van) ໃນວັນທີຊາວ
ສາມ ແລະໃຫ້ຂຽນປະກາດຕາມທີ່ໂມຣ໌ເດກັຍບັນຊາທຸກຢ່າງກ່ຽວກັບພວກຢິວ ເຖິງບັນດາຜູ້ປົກຄອງແຂວງ ຜູ້ປົ
ກຄອງເມືອງ ແລະຜູ້ວ່າຣາຊການແລະເຈົ້າຫນ້າທີ່ຂອງມົນທົນ ຕັ້ງແຕ່ອິນເດັຽເຖິງເອທິໂອເປັຽນຶ່ງຮ້ອຍຊາວເຈັດມົນ
ທົນ ໄປເຖິງທຸກມົນທົນເປັນພາສາແລະວິທີຂຽນຂອງມົນທົນນັ້ນ ແລະເຖິງຊົນທຸກຊາດເປັນພາສາຂອງເຂົາ ແລະເຖິງ
ພວກຢິວເປັນພາສາຂຽນແລະໃນພາສາຂອງເຂົາ
10 ແລະເຂົາຂຽນໃນພຣະນາມຂອງກະສັດອາຮາຊູ ເອຣູສ ແລະປະທັບຕາຂອງກະສັດໃສ່ ແລະສົ່ງຈົດຫມາຍນັ້ນໄປທາງ
ຜູ້ເດີນຂ່າວຂີ່ມ້າໄວ ຊຶ່ງເຄີຍໃຊ້ໃນຣາຊາການຂອງພຣະຣາຊາ ອັນເປັນເຊື້ອມ້າຫລວງ
11 ຕາມຈົດຫມາຍເຫລົ່ານີ້ພຣະຣາຊາຊົງອະນຸຍາດໃຫ້ພວກຢິວຜູ້ຢູ່ໃນທຸກມົນທົນຊຸມນຸມກັນແລະປ້ອງກັນຊີວິດຂອງຕົນ
ໃຫ້ທຳລາຍ ໃຫ້ສັງຫານແລະໃຫ້ລ້າງຜານກຳລັງພົນໃດໆຂອງປະຊາຊົນຫລືມົນທົນໃດໆຊຶ່ງຈະມາທຳຮ້າຍທັງເດັກ
ແລະຜູ້ຍິງ ແລະປຸ້ນເອົາສິ່ງຂອງຂອງເຂົາ
12 ໃນວັນດຽວຕລອດທົ່ວທຸກມົນທົນຂອງກະສັດອາຮາຊູເອຣູສ ຄືວັນທີສິບສາມເດືອນທີສິບສອງ ຊຶ່ງເປັນເດືອນອາດາຣ໌
(A’dar)
13 ສຳເນົາຂອງຫນັງສືທີ່ຂຽນນັ້ນຈະຕ້ອງປະກາດໃນທຸກມົນທົນ ແລະອອກໂດຍການປ່າວຮ້ອງແກ່ຊົນຊາດທັງປວງ
ພວກຢິວຈະຕ້ອງພ້ອມກັນໃນວັນນັ້ນແກ້ແຄ້ນສັດຕຣູຂອງຕົນ
14 ຄົນເດີນຂ່າວຊຶ່ງຂີ່ມ້າໄວຊຶ່ງໃຊ້ໃນຣາຊການຂອງພຣະຣາຊາ ຮີບເລັ່ງຂີ່ໄປຕາມພຣະບັນຊາຂອງພຣະຣາຊາ ປະ
ກາດນັ້ນອອກໃນຊູຊາເມືອງປ້ອມ
15 ເມື່ອໂມຣ໌ເດກັຍອອກໄປພົ້ນພຣະພັກພຣະຣາຊາ ສວມສລອງພຣະອົງສີຟ້າແລະສີຂາວ ພ້ອມກັບມົງກຸດທອງຄຳໃຫຍ່
ແລະເສື້ອຄຸມຜ້າປ່ານສີມ່ວງ ຝ່າຍຊາວນະຄອນຊູຊາກໍໂຮ່ຮ້ອງຊົມຊື່ນຍິນດີ
16 ພວກຢິວມີສະວັດດີພາບ ຄວາມຍິນດີ ຊື່ນບານແລະມີກຽດ
17 ທຸກມົນທົນທຸກເມືອງ ບໍ່ວ່າບ່ອນໃດທີ່ພຣະບັນຊາຂອງພຣະຣາຊາແລະປະກາດຂອງພຣະອົງມາເຖິງ ກໍມີຄວາມຍິນດີ
ແລະຄວາມ  ຊື່ນບານຖ້ວມກາງພວກຢິວ ມີການລ້ຽງແລະວັນລື້ນເລີງ ຄົນເປັນຈຳນວນຫລວງຫລາຍມາຈາກຊົນຊາດ
ຂອງປະເທດກໍປະກາດຕົວເປັນພວກຢິວ ເພາະຄວາມຢ້ານພວກຢິວມາຄອບງຳເຂົາ

## 9 ພວກຢິວທຳລາຍບັນດາສັດຕຣູຂອງຕົນ

Destruction of the Enemies of the Jews

1 ໃນເດືອນທີສິບສອງຊຶ່ງເປັນເດືອນອາດາຣ໌ ວັນທີສິບສາມເດືອນນັ້ນ ເມື່ອຈະປະຕິບັດຕາມພຣະບັນຊາຂອງພຣະຣາ
ຊາທີ່ປະກາດເປັນທາງການ ໃນວັນນັ້ນເອງທີ່ສັດຕຣູຂອງພວກຢິວຫວັງຈະເປັນໃຫຍ່ເຫນືອພວກຢິວ (ແຕ່ຊຶ່ງຖືກປ່ຽນ
ໄປເປັນວັນທີ່ພວກຢິວໄດ້ຄວາມເປັນໃຫຍ່ເຫນືອພວກທີ່ກຽດຊັງເຂົາ)
2 ພວກຢິວກໍຊຸມນຸມກັນໃນບັນດາຫົວເມືອງຕລອດທົ່ວທຸກມົນທົນຂອງກະສັດອາຮາຊູເອຣູສເພື່ອຈະຂ້າພວກທີ່ຫາຊ່ອງ
ທຳຮ້າຍເຂົາ ບໍ່ມີຜູ້ໃດຕໍ່ຕ້ານພວກເຂົາໄດ້ ເພາະຄວາມຢ້ານເຂົາຄອບງຳເຫນືອຊົນຊາດທັງປວງ
3 ບັນດາເຈົ້ານາຍທັງປວງຂອງມົນທົນແລະຜູ້ປົກຄອງແຂວງແລະຜູ້ວ່າຣາຊການເມືອງແລະເຈົ້າຫນ້າທີ່ຣາຊການກໍ
ຊ່ອຍພວກຢິວດ້ວຍ ເພາະຄວາມຢ້ານໂມຣ໌ເດກັຍຄອບງຳເຂົາ

4 ເຫດວ່າໂມຣ໌ເດກັຍເປັນໃຫຍ່ຢູ່ໃນສຳນັກຂອງພຣະຣາຊາແລະຊື່ສຽງຂອງທ່ານຊ່າລືໄປທົ່ວທຸກມົນທົນ ເພາະຊາຍທີ່ຊື່ໂມຣ໌ເດກັຍນັ້ນມີອຳນາດຫລາຍຍິ່ງຂຶ້ນທຸກທີ

5 ພວກຢິວຈຶ່ງໂຈມຕີສັດຕຣູທັງຫມົດຂອງຕົນດ້ວຍດາບ ຂ້າແລະທຳລາຍເຂົາ ແລະທຳແກ່ຜູ້ທີ່ກຽດຊັງເຂົາຕາມໃຈຊອບ

6 ໃນຊູຊາເມືອງປ້ອມພວກຢິວໄດ້ຂ້າແລະທຳລາຍລ້າງເສັຽຫ້າຮ້ອຍຄົນ

7 ໄດ້ຂ້າປາຣ໌ຊານດາທາ ດັນໂຟນ ອັສຊາທາ

8 ໂປຣາທາ ອາດາລີອາ ອາຣິດາທາ

9 ປາຣ໌ມັສຕາ ອາຣີຊັຍ ອາຣີດັຍ ວັຍຊາທາ

10 ບຸດຊາຍທັງສິບຂອງຮາມານບຸດຮາມເມດາທາ ສັດຕຣູຂອງພວກຢິວ ແຕ່ເຂົາບໍ່ໄດ້ປຸ້ນເຂົ້າຂອງ

11 ໃນວັນນັ້ນຈຳນວນຄົນທີ່ຖືກຂ້າໃນຊູຊາເມືອງປ້ອມກໍຖືກນຳມາສເນີພຣະຣາຊາ

12 ເຈົ້າຊີວິດຈຶ່ງສັ່ງກັບພຣະຣາຊີນີເອສເທີວ່າ, “ພວກຢິວໄດ້ຂ້າເສັຽຫ້າຮ້ອຍຄົນໃນຊູຊາເມືອງປ້ອມ ຮວມທັງບຸດຊາຍທັງສິບຄົນຂອງຮາມານດ້ວຍ ໃນມົນທົນຂອງພຣະຣາຊາທີ່ເຫລືອຢູ່ນັ້ນ ເຂົາໄດ້ທຳຫຍັງກັນ ບັດນີ້ຄຳຮ້ອງຂອງພຣະນາງຄືຫຍັງ ເຮົາຈະປະທານໃຫ້ ຄຳທູນຂອງພຣະນາງຕໍ່ໄປມີຫຍັງອີກ ເຮົາກໍຈະກະທຳໃຫ້ສຳເຣັດ

13 ພຣະນາງເອສເທີທູນວ່າ, “ຖ້າເປັນທີ່ພໍພຣະທັຍ   ພຣະຣາຊາ ຂໍໃຫ້ພວກຢິວທີ່ຢູ່ໃນຊູຊາ ໄດ້ກະທຳຕາມຄຳປະກາດຂອງວັນນີ້ໃນມື້ອື່ນອີກ ແລະຂໍໃຫ້ແຂວນຄໍບຸດຊາຍທັງສິບຂອງຮາມານເທິງຫລັກນັ້ນ”

14 ພຣະຣາຊາໄດ້ຊົງບັນຊາໃຫ້ກະທຳເຊັ່ນນັ້ນ ມີປະກາດອອກໃນຊູຊາ ແລະບຸດທັງສິບຂອງຮາມານ ກໍຖືກແຂວນຄໍເທິງຫລັກ

15 ພວກຢິວທີ່ຢູ່ໃນຊູຊາຊຸມນຸມກັນໃນວັນທີສິບສີ່ເດືອນອາດາຣ໌ດ້ວຍ ແລະໄດ້ຂ້າສາມຮ້ອຍຄົນໃນຊູຊາ ແຕ່ເຂົາບໍ່ໄດ້ຍຶດສິ່ງຂອງ

ເທສການປູຣິມ

16 ຝ່າຍພວກຢິວອື່ນໆຊຶ່ງຢູ່ໃນມົນທົນຂອງພຣະຣາຊາກໍຊຸມນຸມກັນປ້ອງກັນຊີວິດ ແລະພົ້ນຈາກສັດຕຣູຂອງເຂົາ ເຂົາຂ້າຜູ້ທີ່ກຽດຊັງເຂົາເສັຽເຈັດຫມື່ນຫ້າພັນຄົນ ແຕ່ເຂົາບໍ່ໄດ້ຍຶດສິ່ງຂອງ

17 ເຫດນີ້ເກີດຂຶ້ນໃນວັນທີສິບສາມເດືອນອາດາຣ໌ ແລະໃນວັນທີສິບສີ່ເຂົາຢຸດພັກ ແລະກະທຳວັນນັ້ນໃຫ້ເປັນວັນກິນລ້ຽງແລະຍິນດີ

The Feast of Purim Inaugurated

18 ແຕ່ພວກຢິວທີ່ຢູ່ໃນຊູຊາຊຸມນຸມກັນໃນວັນທີສິບສາມແລະວັນທີສິບສີ່ ແລະຢຸດພັກໃນວັນທີສິບຫ້າ ທຳໃຫ້ວັນນັ້ນເປັນວັນກິນລ້ຽງແລະຍິນດີ

19 ເຫດສັນນັ້ນພວກຢິວໃນຊົນນະບົດ ທີ່ຢູ່ຕາມຫົວເມືອງທີ່ມີກຳແພງຖືວັນແຫ່ງຄວາມຍິນດີແລະກິນລ້ຽງ ແລະຖືເປັນວັນລື້ນເຣີງ ແລະເປັນວັນທີ່ເຂົາສົ່ງຂອງຂວັນໄປໃຫ້ກັນແລະກັນ

20 ແລະໂມຣ໌ເດກັຍບັນທຶກເຣື່ອງນີ້ແລະສົ່ງຈົດຫມາຍໄປຍັງພວກຢິວທັງປວງຜູ້ຢູ່ໃນມົນທົນທັງປວງຂອງກະສັດອາຮາຊູອາຣັສ ທັງໃກ້ແລະໄກ

21 ຊັກຊວນເຂົາໃຫ້ຖືວັນທີສິບສີ່ເດືອນອາດາຣ໌ ແລະວັນທີສິບຫ້າເດືອນດຽວກັນທຸກໆປີ

22 ເປັນວັນທີ່ພວກຢິວພົ້ນຈາກສັດຕຣູຂອງເຂົາ ແລະເປັນເດືອນທີ່ປ່ຽນຄວາມໂສກເສົ້າເປັນຄວາມຍິນດີ ແລະການຄ່ຳຄວນເປັນວັນລື້ນເຣີງໃຫ້ແກ່ເຂົາ ແລະໃຫ້ເຂົາຖືເປັນວັນກິນລ້ຽງແລະວັນຍິນດີ ເປັນວັນທີ່ສົ່ງຂອງຂວັນແກ່ກັນແລະກັນແລະໃຫ້ຂອງຂວັນແກ່ຄົນຈົນ

23 ພວກຢິວຈຶ່ງຕົກລົງກະທຳຕາມທີ່ເຂົາຕັ້ງຕົ້ນແລ້ວ ແລະຕາມທີ່ໂມຣ໌ເດກັຍຂຽນໄປເຖິງເຂົາ

24 ເພາະຮາມານບຸດຮາມເມດາທາ ຄົນອາກາກ ສັດຕຣູຂອງພວກຢິວທັງປວງ ໄດ້ປອງຮ້າຍຕໍ່ພວກຢິວເພື່ອທຳລາຍເຂົາໄດ້ໃຊ້ສະຫລາກ (ຊຶ່ງເອີ້ນກັນວ່າ ປູຣິມ) ເພື່ອລ້າງຜານແລະທຳລາຍເຂົາ

25 ແຕ່ເມື່ອພຣະນາງເອສເທີເຂົ້າເຝົ້າພຣະຣາຊາ ພຣະອົງຊົງຮັບສັ່ງເປັນລາຍລັກອັກສອນໃຫ້ແຜນການມຸ່ງຮ້າຍຂອງ
ທ່ານ ຊຶ່ງທ່ານໄດ້ຄຶດຕໍ່ພວກຢິວນັ້ນກັບຕົກລົງເທິງຫົວຂອງທ່ານເອງ ແລະໃຫ້ຕົວທ່ານກັບບຸດຂອງທ່ານຖືກແຂວນຄໍ
ເທິງຫລັກ
26 ເຫດສັນນັ້ນເຂົາຈຶ່ງເອີ້ນວັນເຫລົ່ານີ້ວ່າ ປູຣິມ ຕາມຄໍາປູຣ໌ ດັ່ງນັ້ນເພາະທຸກຢ່າງທີ່ຂຽນໄວ້ໃນຈົດຫມາຍນີ້ ແລະເພາະ
ສິ່ງທີ່ພວກຢິວຕ້ອງຜະເຊີນໃນເຣື່ອງນີ້ ແລະສິ່ງທີ່ອຸບັດແກ່ເຂົາ
27 ພວກຢິວກໍກໍານົດແລະຮັບວ່າຕົວເຂົາເອງ ເຊື້ອສາຍຂອງເຂົາ ແລະບັນດາຜູ້ທີ່ຈະເປັນຢິວວ່າ ຢິວຈະຖືສອງວັນນີ້ດັ່ງທີ່
ຂຽນໄວ້ ແລະຕາມເວລາກໍານົດໄວ້ທຸກປີບໍ່ໄດ້ຂາດ
28 ແລະວ່າຈະຈົດຈໍາວັນເຫລົ່ານີ້ ແລະຖືຕລອດຊົ່ວຊາດເຊື້ອສາຍ ທຸກຕະກູນ ມົນທົນແລະເມືອງ ວັນເທສການປູຣິມນີ້
ຈະບໍ່ເລີກໃນຖ້າມກາງພວກຢິວ ຫລືການລະນຶກເຖິງວັນເຫລົ່ານີ້ຈະບໍ່ສິ້ນລົງໃນເຊື້ອສາຍຂອງເຂົາເລີຍ
29 ແລ້ວພຣະຣາຊີນີເອສເທີທິດາຂອງອາບີຮາອິນ ກັບໂມຣ໌ເດກັຍຄົນຢິວ ກໍຂຽນເປັນລາຍລັກອັກສອນຮັບຮອງຈົດ
ຫມາຍສະບັບທີສອງນີ້ເຣື່ອງ  ເທສການປູຣິມ
30 ໃຫ້ສົ່ງຈົດຫມາຍໄປເຖິງຢິວທັງປວງໃນນຶ່ງຮ້ອຍຊາວເຈັດມົນທົນຂອງອາຣາຊູອາຣັສ ເປັນຄໍາອວຍພອນໃຫ້ຢູ່ເຢັນ
ເປັນສຸກ
31 ແລະໃຫ້ຖືວັນເທສການປູຣິມເຫລົ່ານີ້ຕາມກໍານົດຣະດູການ ດັ່ງທີ່ໂມຣ໌ເດກັຍຄົນຢິວ ແລະພຣະຣາຊີນີເອສເທີມີຄໍາສັ່ງ
ພວກຢິວ ແລະຕາມທີ່ເຂົາຕັ້ງໄວ້ສໍາລັບຕົນເອງແລະສໍາລັບເຊື້ອສາຍຂອງເຂົາກ່ຽວກັບການອົດອາຫານແລະການ
ຮ້ອງທຸກຂອງເຂົາ
32 ພຣະບັນຊາຂອງພຣະຣາຊີນີເອສເທີຕັ້ງລະບຽບການເທສການປູຣິມໄວ້ ແລະມີບັນທຶກໄວ້ເປັນລາຍລັກອັກສອນ

## 10 ຄວາມຍິ່ງໃຫຍ່ຂອງໂມຣ໌ເດກັຍ

The Greatness of Xerzes and Mordecai

1 ກະສັດອາຣາຊູເອຣູສມີຮັບສັ່ງໃຫ້ເກັບບັນນາການທົ່ວຣາຊອານາຈັກ ແລະຕາມແຜ່ນດິນຊາຍທະເລ
2 ພຣະຣາຊກິຈອັນປະກອບດ້ວຍພຣະຣາຊອໍານາດແລະອານຸພາບ ກັບເຣື່ອງຣາວລະອຽດຂອງ
ຍົດສັກອັນສູງຂອງໂມຣ໌ເດກັຍ ຊຶ່ງພຣະຣາຊາຊົງເລື່ອນທ່ານຂຶ້ນ ບໍ່ໄດ້ບັນທຶກໄວ້ໃນຫນັງສືພົງສາວະດານຂອງພຣະ
ຣາຊາແຫ່ງເມເດັຽ ແລະເປີເຊັຽຫລື
3 ເພາະໂມຣ໌ເດກັຍຄົນຢິວມີຕໍາແຫນ່ງຮອງກະສັດອາຣາຊູອາຣູສ ແລະທ່ານເປັນໃຫຍ່ຖ້າມກາງພວກຢິວ ແລະເປັນທີ່
ຊອບພໍຂອງມວນຍາດພີ່ນ້ອງຂອງທ່ານ ເພາະທ່ານສແວງຫາຄວາມສຸກໃຫ້ຊົນຊາດຂອງທ່ານ ແລະເວົ້າໃຫ້ເກີດສັນຕິ
ສຸກແກ່ເຊື້ອສາຍທັງປວງຂອງທ່ານ